สำนักงาน ຄຄຊ
ຂາເຂົ້າ ເລກທີ 030
ວັນທີ 13.1.15
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງວ່າການສັດຕະພັນ
ຂາເຂົ້າ ເລກທີ: 88
ວັນທີ: 08.01.2015
ໂທລະສັບ: 243710

ເລກທີ 11/ຫລບ.ກລຂ.
ນະຄອນຫຼວງວຽງຈັນ, ວັນທີ 5-1-2015

## ແຈ້ງການ

ຮຽນ : ທ່ານລັດຖະມົນຕີວ່າການ ກະຊວງການເງິນ.

ເລື່ອງ : ຜົນການເຈລະຈາສັນຍາເງິນກູ້ຮ່ວມກັບທະນາຄານພັດທະນາອາຊີ ( ADB) ສຳລັບໂຄງການລ້ຽງສັດ ເພື່ອຜະລິດເປັນສິນຄ້າ ຢູ່ເຂດພາກເໜືອຂອງ ສປປ ລາວ.

- ອີງຕາມເອກະສານສະເໜີ ສະບັບເລກທີ 4158/ກງ, ລົງວັນທີ 17 ທັນວາ 2014 ຂອງກະຊວງການເງິນ.
- ອີງຕາມການຕົກລົງ ແລະ ຊີ້ນຳ ຂອງທ່ານນາຍົກລັດຖະມົນຕີ ແລະ ທ່ານຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳຂົງເຂດເສດຖະກິດມະຫາພາກ ແລະ ບໍລິການ ໃນວັນທີ 24 ທັນວາ 2014.

ຫ້ອງວ່າການລັດຖະບານ ຂໍຖືເປັນກຽດແຈ້ງການຕົກລົງ ແລະ ຊີ້ນຳ ຂອງທ່ານນາຍົກລັດຖະມົນຕີ ແລະ ທ່ານຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳຂົງເຂດເສດຖະກິດມະຫາພາກ ແລະ ບໍລິການ ມາຍັງທ່ານຊາບດັ່ງນີ້ :

" 1). ເຫັນດີຮັບຮອງດ້ານຫຼັກການ ຜົນການເຈລະຈາສັນຍາເງິນກູ້ ມູນຄ່າ 14.164.000 ເອັສດີອາ ( ທຽບເທົ່າ 21 ລ້ານໂດລາສະຫະລັດ ) ຮ່ວມກັບທະນາຄານພັດທະນາອາຊີ ( ADB ) ສຳລັບໂຄງການລ້ຽງສັດ ເພື່ອຜະລິດເປັນສິນຄ້າ ຕາມການສະເໜີຂອງກະຊວງການເງິນ.

2). ມອບໃຫ້ກະຊວງການເງິນ ເຊັນສັນຍາເງິນກູ້ ຮ່ວມກັບທະນາຄານພັດທະນາອາຊີ ( ADB ) ".

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມທິດຊີ້ນຳດັ່ງກ່າວດ້ວຍ.

ລັດຖະມົນຕີ, ຫົວໜ້າຫ້ອງວ່າການລັດຖະບານ

ສອນໄຊ ສີພັນດອນ

ບ່ອນນຳສົ່ງ:

- ນາຍົກ-ຮອງນາຍົກລັດຖະມົນຕີ 06 ສະບັບ
- ຫ້ອງວ່າການສູນກາງພັກ 01 ສະບັບ
- ຫ້ອງວ່າການສະພາແຫ່ງຊາດ 01 ສະບັບ
- ກະຊວງແຜນການ ແລະ ການລົງທຶນ 01 ສະບັບ
- ກະຊວງກະສິກຳ ແລະ ປ່າໄມ້ 01 ສະບັບ
- ທະນາຄານແຫ່ງ ສປປ ລາວ 01 ສະບັບ
- ເກັບມ້ຽນ 10 ສະບັບ